# ໝັ້ນໃຈໃນການບໍລິການ

## BCEL ໄດ້ຮັບໃບຢັ້ງຢືນມາດຕະຖານສາກົນ ISO 9001:2015

### ດ້ານການບໍລິການຄຸນນະພາບ (The Provision Of Banking Services)

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ໄດ້ຮັບໃບຢັ້ງຢືນມາດຕະຖານສາກົນ ISO 9001:2015 ດ້ານການບໍລິການຄຸນນະພາບ (The Provision Of Banking Services), BCEL ໄດ້ຖືກຮັບຮອງລະບົບມາດຕະຖານສາກົນ ISO 9001: 2008 ດ້ານການບໍລິການຄຸນນະພາບ (The Provision Of Banking Services) ນັບແຕ່ປີ 2011 ເປັນຕົ້ນມາ ແລະ ໃນປີນີ້ແມ່ນໄດ້ຮັບການຮອງຮັບມາດຕະຖານ ISO 9001:2015 ເຊິ່ງເປັນເວີຊັ້ນ (Version) ລ່າສຸດທີ່ສາກົນນຳໃຊ້ໃນປະຈຸບັນ ໂດຍ BCEL ໄດ້ຮອງຮັບເວີຊັ້ນນີ້ມາແຕ່ ປີ 2017 ຈົນເຖິງປະຈຸບັນ, ໂດຍໄດ້ຮັບການກວດສອບ ແລະ ຮັບຮອງໂດຍບໍລິສັດ SGS (Thailand) ການໄດ້ຮັບໃບຢັ້ງຢືນດັ່ງກ່າວເປັນການກາລັນຕີ ດ້ານຄຸນະພາບ ແລະ ການບໍລິການຂອງ ທຄຕລ ເພື່ອໃຫ້ລູກຄ້າກໍຄືສັງຄົມໃຫ້ມີຄວາມເຊື່ອໝັ້ນຕໍ່ກັບການໃຊ້ບໍລິການ.


SGS

Certificate TH17/10522

The management system of

Banque pour le commerce exterieur LAO Public (BCEL)

No.1, Pangkham Rd., P.O. Box 2925, Vientiane Capital, Lao PDR

has been assessed and certified as meeting the requirements of

ISO 9001:2015

For the following activities

The provision of banking services

This certificate is valid from 25 April 2021 until 06 November 2023 and remains valid subject to satisfactory surveillance audits. Recertification audit due a minimum of 60 days before the expiration date. Issue 3. Certified since 20 October 2017

The audit leading to this certificate commenced on 31 March 2021
Previous issue certificate validity date was until 06 November 2020

Authorised by

SGS United Kingdom Ltd
Rossmore Business Park Ellesmere Port Cheshire CH65 3EN UK
t +44 (0)151 350-6666 f +44 (0)151 350-6600 www.sgs.com

HC SGS 9001 2015 0818

Page 1 of 1



ປະຈຸບັນ BCEL ມີຕາໜ່າງການໃຫ້ບໍລິການໃນຂອບເຂດທົ່ວປະເທດ ປະກອບມີ 20 ສາຂາ, 98 ໜ່ວຍບໍລິການ ແລະ 12 ຫ້ອງແລກປ່ຽນ ທີ່ສາມາດຮອງຮັບການໃຫ້ບໍລິການລູກຄ້າໄດ້ທຸກຂົງເຂດທົ່ວປະເທດ ແລະ BCEL ເປັນຜູ້ນຳດ້ານການໃຫ້ບໍລິການເຄື່ອງມືເອເລັກໂທຣນິກ ທາງດ້ານການເງິນ-ການທະນາຄານ ທີ່ມີຄວາມທັນສະໄໝ ໂປ່ງໃສ ກວດສອບໄດ້ ສາມາດຕອບໂຈດຄວາມຕ້ອງການໃຊ້ບໍລິການຂອງລູກຄ້າໄດ້ຫຼາຍທີ່ສຸດ ໂດຍມຸ່ງເນັ້ນເຖິງຄວາມວ່ອງໄວ ສະດວກສະບາຍ ໄດ້ມາດຕະຖານສາກົນ ແລະ ການໄດ້ຮັບໃບຢັ້ງຢືນລະບົບມາດຕະຖານ ISO 9001:2015 ດ້ານການບໍລິການຄຸນະພາບ (The Provision Of Banking Services) ໃນຄັ້ງນີ້ ຖືເປັນໝາກຜົນແຫ່ງຄວາມສຳເລັດອັນໜຶ່ງ ທີ່ເກີດຈາກຄວາມຕັ້ງໃຈ ແລະ ເອົາໃຈໃສ່ ຂອງຄະນະຜູ້ບໍລິຫານ ຕະຫຼອດຮອດພະນັກງານທຸກໆຄົນທີ່ໄດ້ສຸມໃສ່ພັດທະນາ ທຸ້ມເທທັງແຮງກາຍແຮງໃຈ ຈົນໄດ້ມາແຫ່ງຄວາມສຳເລັດໃນຄັ້ງນີ້.

ໃນຕໍ່ໜ້າ BCEL ຍັງຄົງສືບຕໍ່ ມຸ້ງໝັ້ນພັດທະນາລະບົບການບໍລິການ ລວມໄປເຖິງຜະລິດຕະພັນຕ່າງໆ ຢ່າງບໍ່ຢຸດຢັ້ງ ເພື່ອໃຫ້ແທດເໝາະກັບຄວາມຕ້ອງການຂອງລູກຄ້າຜູ້ໃຊ້ບໍລິການ ໂດຍທຸກຜະລິດຕະພັນ ແລະ ການບໍລິການແມ່ນເນັ້ນໃສ່ຄວາມທັນສະໄໝ, ສະດວກສະບາຍ, ມີຄວາມປອດໄພ ສາມາດກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ ເພື່ອຕອບສະໜອງຄວາມຕ້ອງການລູກຄ້າບົນພື້ນຖານຄວາມຮັບຜິດຊອບສູງຕໍ່ສັງຄົມກໍຄືລູກຄ້າຜູ້ທີ່ໃຊ້ບໍລິການ.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**ທັນສະໄໝ ວ່ອງໄວ ໝັ້ນໃຈ**